# ກອງທຶນຫລຸດຜ່ອນຄວາມທຸກຍາກ

## ໜັງສືເຊີນເຂົ້າຮ່ວມສົມທຽບລາຄາ (ປະກາດຄັ້ງທີ 2)

**ສັນຍາເລກທີ**: PRF II/TA.Tools/GS/062012

1. ລັດຖະບານ ສປປ ລາວ ໄດ້ຮັບທຶນຊ່ວຍເຫລືອລ້າ ຈາກສະມາຄົມພັດທະນາສາກົນ (IDA) ສົມທົບກັບກອງທຶນສຳຮອງຈາກບັນດາຜູ້ໃຫ້ທຶນຕ່າງໆ ເພື່ອເປັນທຶນຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ມີຈຸດປະສົງນຳໃຊ້ສ່ວນນຶ່ງຂອງທຶນ ເພື່ອຈັດຊື້ເຄື່ອງມືສຳຫລວດອອກແບບການກໍ່ສ້າງ, ດ້ວຍການສະເໜີໃຫ້ຍື່ນຊອງປະມູນສົມທຽບລາຄາ.

2. ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ II ຂໍເຊີນບໍລິສັດ/ຮ້ານ ຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສຳລັບການຈັດຊື້ເຄື່ອງມືສຳຫລວດອອກແບບການກໍ່ສ້າງ, ໄລຍະເວລາໃນການສົ່ງມອບເຄື່ອງ ແມ່ນ **30 ວັນ.**

   ລາຍການອຸປະກອນສຳຫລວດ-ອອກແບບການກໍ່ສ້າງ ລະອຽດດັ່ງນີ້:

| ລ/ດ | ລາຍການອຸປະກອນ | ຫົວໜ່ວຍ | ຈຳນວນ |
|---|---|---|---|
| 1 | ກ້ອງລະດັບ (Leveling Instrument) | ຊຸດ | 1 |
| 2 | ກ້ອງມູມ (Total station) | ຊຸດ | 1 |
| 3 | ອຸປະກອນທົດລອງດິນ (Soil testing tools) | ຊຸດ | 5 |
| 4 | ຈັກຄິດໄລ່ຂອງວິຊາການ (Technical Calculators) | ໜ່ວຍ | 25 |
| 5 | ເຄື່ອງແທກຄວາມຕ້ານ ຂອງດິນແບບເລິກ (Earth and ground Resistance tester) | ຊຸດ | 1 |

3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນດຳລັດ ວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ດັດແກ້ສະບັບເລກທີ 0861/ກງ, ລົງວັນທີ 5/05/2009.

4. ລັດຖະບານແຫ່ງ ສປປ ລາວ ແລະ ທະນາຄານໂລກ ຈະປະກາດແຈ້ງການວ່າບໍລິສັດເຂົ້າແຂ່ງຂັນປະມູນທີ່ບໍ່ມີຄວາມເໝາະສົມ, ພ້ອມທັງກຳນົດ ຫລື ລະບຸໄລຍະເວລາ ທີ່ຖືກຫ້າມບໍ່ໃຫ້ເຂົ້າຮ່ວມການແຂ່ງຂັນປະມູນໃນການປະມູນຈັດຊື້ ທີ່ນຳໃຊ້ງົບປະມານຂອງລັດ ແລະ ຂອງທະນາຄານໂລກ, ຖ້າຫາກພົບເຫັນວ່າບໍລິສັດ ມີການພົວພັນເຖິງການສໍ້ລາດບັງຫລວງ, ການສໍ້ໂກງ, ການສົມຮູ້ຄວາມຄິດ ຫລື ການບີບບັງຄັບເພື່ອໃຫ້ໄດ້ມາສັນຍາ.

5. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ **14:00 ໂມງ** ຂອງວັນທີ **13/07/2012** ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ຫ້ອງວ່າການລັດຖະບານ, ອາຄານ 501, ຊັ້ນ 1, ບ້ານ ສີສະຫວາດ, ຖະນົນ ນາໄຮ່ດຽວ, ນະຄອນຫລວງວຽງຈັນ ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດ ໃນເວລາ **14:00 ໂມງ**, ຂອງວັນທີ **13/07/2012** ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ.

6. ທ່ານສາມາດສອບຖາມຂໍ້ມູນເພີ້ມເຕີມ ແລະ ພົວພັນເອົາເອກະສານປະມູນສົມທຽບລາຄາໄດ້ ເລີ້ມແຕ່ວັນທີ 26/06/2012 ເປັນຕົ້ນໄປ, ຕາມວັນ ແລະ ເວລາເຮັດວຽກ, ທີ່ຫ້ອງການ ທລຍ, ຕັ້ງຢູ່ ຫ້ອງວ່າການລັດຖະບານ, ອາຄານ 501, ຊັ້ນ 1, ໂທ: 261479-80 (ຕໍ່ 105), ພົວພັນໜ່ວຍງານຈັດຊື້.